# ຄຳນິຍາມ ເພດ ແລະ ບົດບາດ

1. **ຄຳວ່າ "sex" ຫລື ເພດ**

ໃນທຶດສະດີ ຄຳວ່າ **Sex ຫລື ເພດ** ໝາຍເຖິງຄວາມແຕກຕ່າງທາງລັກສະນະຮ່າງກາຍ ລະຫວ່າງຍິງ-ຊາຍ[1] , ເປັນສິ່ງທີ່ທຳມະຊາດສ້າງຂື້ນມາ.

2. **ຄຳວ່າ "Gender" ຫລື ບົດບາດ**

**ບົດບາດ** ໝາຍເຖິງ ສິ່ງທີ່ສັງຄົມສ້າງຂື້ນ ເປັນເອກະລັກໃນຕົວຕົນ (ອັດຕະລັກ), ເປັນ ຄຸນສົມບັດ ແລະ ເປັນບົດບາດ ສະເພາະ **ຍິງ-ຊາຍ** ແລະ ໃຫ້ຄວາມສຳຄັນທາງສັງຄົມ ແລະ ທາງວັດທະນະທຳ ແບບແຕກຕ່າງກັນຕໍ່ຮ່າງກາຍຂອງ **ຍິງ ແລະ ຊາຍ**, ເຊິ່ງມັນສົ່ງຜົນໃຫ້ ເກີດເປັນສາຍພົວພັນປົກຄອງກັນ ແບບເລື່ອມລ້ຳຕ່ຳສູງ ເປັນລຳດັບຊັ້ນລະຫວ່າງ **ຍິງ-ຊາຍ** ແລະ ເກີດເປັນການກະຈາຍອຳນາດທີ່ໃຫ້ສິດທິ ທີ່ເອື້ອອຳນວຍແກ່ຜູ້ຊາຍຫລາຍກວ່າ ແລະ ສ້າງຂໍ້ເສຍປຽບໃຫ້ແມ່ຍິງຫລາຍກວ່າ. ການສ້າງຕຳແໜ່ງໃນສັງຄົມໃຫ້ສະເພາະ**ຍິງ** ແລະ ສະ ເພາະ**ຊາຍ** ປະກົດຕົວຂື້ນດ້ວຍການກະທົບໃສ່ຂອງປັດໃຈທາງການເມືອງ, ເສດຖະກິດ, ວັດທະ ນະທຳ, ສັງຄົມ, ສາສະໜາ, ອຸດົມການ ແລະ ສິ່ງແວດລ້ອມ. ການສ້າງຕຳແໜ່ງໃຫ້ສະເພາະ**ຍິງ**ແລະ ສະເພາະ**ຊາຍ** ສາມາດປ່ຽນແປງໄດ້ດ້ວຍວັດທະນະທຳ, ສັງຄົມ, ແລະ ຊຸມຊົນ.

---

[1] ຂໍ້ແນະນຳລວມທົ່ວໄປ ຂອງຄະນະກຳມະການ ສົນທິສັນຍາສາກົນ ວ່າດ້ວຍ ການລົບລ້າງທຸກຮູບການຈຳແນກຕໍ່ແມ່ຍິງ (ຊີດໍ) ເລກທີ 28 ຂໍ້ 5;